Ministry of Education and Sports

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

LUXEMBOURG AID & DEVELOPMENT

LUX DEV Luxembourg Development Cooperation Agency

SKILLS FOR TOURISM PROJECT • LAO/029

ຂໍ້ມູນລະອຽດການທ່ອງທ່ຽວ ປີ • 2020

ພາບລວມການຈ້າງງານ ແລະ ອາຊີບ ໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ ໃນ ສປປ ລາວ.

ຂໍ້ມູນສຳລັບຜູ້ຊອກວຽກ

ໃນປີ 2019 ຈຳນວນນັກທ່ອງທ່ຽວ ແລະ ການສ້າງລາຍຮັບເພີ່ມຂຶ້ນ

ໃນປີ 2019, ມີນັກທ່ອງທ່ຽວສາກົນ ເຂົ້າມາທ່ຽວຕະຫຼອດລະດູ ການ ເພີ່ມຂຶ້ນເຖິງ

4.8 ລ້ານຄົນ

ຈຳນວນນັກທ່ອງທ່ຽວຕ່າງປະເທດ

+14.4% ທຽບໃສ່ ປີ 2018

ສະເລ່ຍການພັກເຊົາ ຂອງນັກທ່ອງທ່ຽວ ທັງໝົດ ແມ່ນ **5** ມື້

ເພີ່ມຂຶ້ນ

$935 ລ້ານ ໂດລາສະຫະລັດ ສ້າງລາຍຮັບຈາກ ນັກທ່ອງທ່ຽວ ສາກົນໄດ້

+15.2% ທຽບໃສ່ ປີ 2018

ຄິດເລື່ອງການທ່ອງທ່ຽວ

ການທ່ອງທ່ຽວແມ່ນເປັນໜຶ່ງມາດົນ ແລ້ວ ໃນຂະແໜງການທີ່ເຂັ້ມແຂງທີ່ ສຸດຂອງ ສປປ ລາວ. ໃນປີ 2019 ໄດ້ມີການຄາດຄະເນວ່າຮອດປີ 2025 ຈະມີນັກທ່ອງທ່ຽວສາກົນ 5,8 ລ້ານຄົນ, ຈະສ້າງລາຍຮັບໄດ້ 1,21 ຕື້ໂດລາສະຫະລັດ.

ໃນປີ **2025**

5.8 ຄາດຄະເນຈະມີ ນັກທ່ອງທ່ຽວ ສາກົນ ຈຳນວນ ລ້ານຄົນ

$1.21 ຈະສ້າງ ລາຍຮັບໄດ້ ຕື້ໂດລາ ສະຫະລັດ

ນີ້ເປັນຂ່າວດີສຳລັບຊາວໜຸ່ມ ທີ່ກຳລັງຄິດຊອກຫາວຽກເຮັດງານທຳ ແລະ ເສັ້ນທາງອາຊີບ - ຫຍິ່ງມີ ນັກທ່ອງທ່ຽວຫຼາຍຂຶ້ນເທົ່າໃດ ກໍ່ຫຍິ່ງຈະສ້າງ ໂອກາດໃນການມີວຽກເຮັດງານທຳ ຫຼາຍຂຶ້ນເທົ່ານັ້ນ. ການເຮັດວຽກໃນການທ່ອງທ່ຽວ ເປັນເສັ້ນທາງທີ່ດີທີ່ຈະຮຽນຮູ້ທັກສະ, ພົບປະກັບບັນດາບຸກຄົນທີ່ໜ້າສົນໃຈ, ລອງເຮັດວຽກທີ່ມີຄວາມແຕກ ຕ່າງ ແລະ ມີໂອກາດໃນການເດີນທາງ.

ຜົນກະທົບຂອງເຊື້ອພະຍາດໄວຣັດ ສາຍພັນໃໝ່ (COVID-19)

ການຫຼຸດລົງໃນຂະແໜງການທ່ອງທ່ຽວ ທີ່ເກີດຈາກເຊື້ອພະຍາດໄວຣັດສາຍ ພັນໃໝ່ (COVID-19) ສົ່ງຜົນກະທົບຕໍ່ທຸລະກິດການທ່ອງທ່ຽວທຸກແຫ່ງ ໃນທົ່ວປະເທດ. ບາງແຫ່ງໄດ້ປິດຊົ່ວຄາວ ແລະ ມີລາຍງານວ່າ ປະມານ 1/3 ຂອງຂະແໜງການດັ່ງກ່າວ ໄດ້ຫຼຸດການມີວຽກເຮັດງານທຳລົງ. ຖ້າຂໍ້ຈຳກັດ ດ້ານການເດີນທາງຜ່ອນຄາຍລົງ, ນັກທ່ອງທ່ຽວສາກົນຈະກັບມາທ່ຽວ ແລະ ຂະແໜງການທ່ອງທ່ຽວ ກໍ່ຈະຟື້ນຕົວຄືນ. ເມື່ອສິ່ງນີ້ເກີດຂຶ້ນ, ທຸລະກິດການ ທ່ອງທ່ຽວ ຕ້ອງການພະນັກງານທີ່ມີທັກສະ ເພື່ອສ້າງຄວາມໝັ້ນໃຈ ໃຫ້ລູກ ຄ້າກັບຄືນມາ ເຊິ່ງທຸລະກິດຕ່າງໆຕ້ອງສາມາດ ດຳເນີນງານໄດ້ຢ່າງປອດໄພ.

ເອກະສານອ້າງອີງ: ທະນາຄານໂລກ, ການຕິດຕາມຜົນກະທົບ ຂອງເຊື້ອພະຍາດໄວຣັດສາຍພັນໃໝ່ (COVID-19) ຕ ຄົວເຮ ອນ ໃນ ສປປ ລາວ, ບົດລາຍງານ ເລກທີ 1, ມີຖຸນາ - ກ ລະກົດ 2020

ວຽກເຮັດງານທຳໃນ ຂະແໜງການທ່ອງທ່ຽວ

ໃນປີ 2018, ການທ່ອງທ່ຽວ ຢູ່ ສປປ ລາວ ໄດ້ສ້າງວຽກເຮັດງານທຳ ປະມານ 54,000 ຕຳແໜ່ງ, ໂດຍມີ ຜູ້ຍິງກວມເອົາປະມານ 63%. ວຽກເຮັດງານທຳໃນຂະແໜງການທ່ອງທ່ຽວ ແມ່ນຈະເລັ່ງໃສ່ເຂດຕົວເມືອງ, ນອກຈາກນີ້ກໍ່ຍັງມີຢູ່ທົ່ວປະເທດໃນທຸລະກິດຕ່າງໆ. ການທ່ອງທ່ຽວຈ້າງຄົນ ທຸກໄວອາຍຸ, ຄວາມສາມາດ ແລະ ທັກສະ.

ການມີວຽກເຮັດງານທຳ ໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ ປີ 2018 ຈຳແນກ ຕາມແຂວງ

ມັກມີການຂາດແຄນບຸກຄະລາກອນ ທີ່ມີຄຸນນະພາບຕະຫຼອດເວລາ ເພື່ອບັນຈຸເຂົ້າໃນຕຳແໜ່ງງານຕ່າງໆ ຂອງຂະແໜງການທ່ອງທ່ຽວ.

ສຳລັບຂໍ້ມູນກ່ຽວກັບຕຳແໜ່ງວ່າງງານ ໃຫ້ໄປທີ່ເວັບໄຊທ໌ທີ່ www.lmi.molsw.gov.la/

ຄຸນອຸດທິການສຶກສາ - ເປີດປະຕູສູ່ອະນາຄົດຂອງທ່ານໃຫ້ຫຼາຍຂຶ້ນ

ການມີທັກສະທີ່ເປັນອັນສະເພາະ ແລະ ຄຸນອຸດທິການສຶກສາ ທີ່ເໝາະກັບວຽກ ແມ່ນການເລີ່ມຕົ້ນທີ່ດີຂອງອາຊີບໃນຂະແໜງການທ່ອງທ່ຽວ. ບັນດາຫຼັກສູດການຝຶກອົບຮົມວິຊາຊີບ ທີ່ກວມເອົາຫລາຍໆເສັ້ນທາງອາຊີບ ແມ່ນມີຢູ່ໃນ 18 ສະຖາບັນເຕັກນິກ-ວິຊາຊີບຂອງລັດ ໃນ 16 ແຂວງ ແລະ ນະຄອນຫຼວງວຽງຈັນ.

ປະຈຸບັນມີນັກຮຽນຫຼາຍກວ່າ 2,000 ຄົນໄດ້ລົງທະບຽນຮຽນ ໃນຫຼັກສູດຊັ້ນກາງ 2 ປີ ໃນການປະຕິບັດງານດ້ານການໂຮງແຮມ, ຮ້ານອາຫານ ຫຼື ບໍລິສັດທ່ອງທ່ຽວ ແລະ ຕົວແທນການທ່ອງທ່ຽວ.





ການເພີ່ມຂຶ້ນໃນການລົງທະບຽນເຂົ້າຮຽນຫຼັກສູດຊັ້ນກາງ ຂອງຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ

ຫຼັກສູດການທ່ອງທ່ຽວ ແລະ ການໂຮງແຮມແມ່ນໄດ້ມີການຮຽນ-ການສອນ ຢູ່ໃນສະຖາບັນການສຶກສາ ແລະ ການຝຶກອົບຮົມຂອງພາກລັດ ແລະ ເອກະຊົນ

ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບອາຊີບໃນການທ່ອງທ່ຽວ ແລະ ການໂຮງແຮມ ແລະ ກ່ຽວກັບທາງເລືອກໃນການຝຶກອົບຮົມໃຫ້ເຂົ້າເບິ່ງທີ່ www.thlaos.com

ຄຸນນະພາບ ແລະ ທັກສະທີ່ຜູ້ຈ້າງງານຊອກຫາ

ຖ້າມີຄວາມຮູ້ກ່ຽວກັບການແຜ່ລະບາດ ຂອງພະຍາດ ແມ່ນສິ່ງທີ່ຈຳເປັນ. ສ້າງຕົນເອງໃຫ້ຄຸ້ນເຄີຍກັບ ແນວຄວາມຄິດຂອງ ອົງການອະນາໄມໂລກ 'ການປະຕິບັດທີ່ດີ' ໃນການເວັ້ນໄລຍະຫ່າງ, ການຄວບຄຸມ ແລະ ການປ້ອງກັນການຕິດເຊື້ອ ເຊັ່ນດຽວກັນ ກັບ ສຸຂະພາບ ແລະ ຄວາມປອດໄພ.



ນອກຈາກທັກສະການເຮັດວຽກນີ້ແລ້ວ, ຜູ້ຈ້າງງານຍັງເບິ່ງເລື່ອງ ທັກສະດ້ານບຸກຄະລິກນຳອີກ ເຊັ່ນ:

- ຄວາມສາມາດໃນການປັບຕົວ
- ຄຸນສົມບັດ
- ການບໍລິການລູກຄ້າ
- ຄວາມຍືດຢຸ່ນ
- ການສື່ສານ
- ການເຮັດວຽກເປັນທີມ
- ຄວາມສາມາດໃນການເຮັດວຽກພາຍໃຕ້ຄວາມກົດດັນ
- ການເວົ້າພາສາອື່ນໆ



ບຸກຄົນຕົວແບບດ້ານການທ່ອງທ່ຽວ

... ມີຄວາມກະຕືລືລົ້ນ ໃນບ່ອນທີ່ຕົນເອງເຮັດວຽກ ແລະ ມີເປົ້າໝາຍໃນຊີວິດ. ພວກເຂົາໄດ້ຕັ້ງມາດຕະຖານການບໍລິການໄວ້ສູງຢ່າງສະໝ່ຳສະເໝີໃນອຸດສະຫະກຳການທ່ອງທ່ຽວ ຂອງ ສປປ ລາວ.

ມາຮູ້ຈັກກັບພວກເຂົາທັງສອງຄົນ

ທ້າວ ບໍວັງ, ອາຍຸພຽງ 21 ປີ, ໄດ້ຖືກເລື່ອນຕຳແໜ່ງ ມາຢູ່ພະແນກຕ້ອນຮັບແຂກ ຂອງໂຮງແຮມອັງສະນາ ແມຊິ່ງ ສຸວັນນະພູມ, ແຂວງຫຼວງພະບາງ. ລາວໄດ້ຖືກຮັບເຂົ້າເຮັດວຽກ ຫຼັງຈາກຮຽນຈົບຫຼັກສູດຝຶກອົບຮົມ 3 ເດືອນຢູ່ທີ່ສູນຝຶກອົບຮົມ LANITH ຫຼວງພະບາງ, ລາວໄດ້ເລີ່ມເຮັດວຽກເປັນພະນັກງານເສີບ, ເຊິ່ງຕໍ່ມາລາວກໍ່ໄດ້ມີໂອກາດຍ້າຍໄປເຮັດວຽກ ຢູ່ພະແນກຕ້ອນຮັບແຂກ. ເມື່ອຖາມການຮຽນ, ລາວເວົ້າວ່າ *"ການຝຶກອົບຮົມນີ້ໄດ້ປ່ຽນແປງຊີວິດຂອງຂ້ອຍ, ມັນແມ່ນບ່ອນທີ່ຂ້ອຍ ພົບເອກະລັກຕົວຕົນຂອງຂ້ອຍ, ເສັ້ນທາງເດີນຂອງຂ້ອຍ".*

ນາງ ສຸກພະຈັນ ຈົບຫຼັກສູດຝຶກອົບຮົມ ພື້ນຖານແຫ່ງອາຊີບ (PTHAS) ທີ່ວິທະຍາໄລ ເຕັກນິກ-ວິຊາຊີບ ແຂວງຈຳປາສັກ. ນາງໄດ້ອະທິບາຍວ່າ *"ຂ້ອຍມີຄວາມມັກໃນການເຮັດອາຫານ ແລະ ຂ້ອຍຄິດວ່າ ມັນຈະເປັນວິທີທີ່ດີ ທີ່ຈະຫັນຄວາມມັກດັ່ງກ່າວໄປສູ່ເປັນມືອາຊີບ".* ຜ່ານມາບໍ່ດົນ ນາງກໍ່ໄດ້ຮັບໜ້າທີ່ ເປັນຜູ້ຊ່ວຍພໍ່ຄົວ ຢູ່ຮ້ານ MP Cafe, ເຊິ່ງນາງໄດ້ເຮັດວຽກຢ່າງໃກ້ຊິດ ກັບພໍ່ຄົວ - ເຊິ່ງເປັນເຈົ້າຂອງຮ້ານ - ເພື່ອຮຽນຮູ້ຕື່ມກ່ຽວກັບອາຊີບນີ້. ມີບາງຄັ້ງ, ພໍ່ຄົວໄດ້ໄວ້ວາງໃຈໃຫ້ນາງຮັບຜິດຊອບຫຼາຍຫນ້າທີ່ ຂອງການເຮັດວຽກໃນເຮືອນຄົວ. ລາວຍິ້ມແຍ້ມແຈ່ມໃສ ທັງເວົ້າວ່າ *"ຂ້ອຍເລີ່ມເປັນຜູ້ຊ່ວຍພໍ່ຄົວ ແຕ່ຕອນນີ້ຂ້ອຍໄດ້ຮັບການເລື່ອນຕຳແໜ່ງ ເປັນໃຫ້ເປັນແມ່ຄົວແລ້ວ!"*

ທ້າວ ບໍວັງ ແລະ ນາງ ສຸກພະຈັນ ໄດ້ສຳເລັດການ ຝຶກອົບຮົມວິຊາຊີບ ທີ່ມີທັກສະທີ່ຈຳເປັນ ໃນການເຮັດວຽກ ຄັ້ງທຳອິດ ໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ. ຖ້າພວກເຂົາສາມາດເຮັດໄດ້, ທ່ານກໍ່ ສາມາດເຮັດໄດ້ຄືກັນ. ມີຫຼັກສູດການສຶກສາ ແລະ ຝຶກອົບຮົມວິຊາຊີບດ້ານ ການທ່ອງທ່ຽວ ແລະ ການໂຮງແຮມ ທີ່ຫຼາກຫຼາຍ ໃນສະຖານ ການສຶກສາ ເຕັກນິກ-ວິຊາຊີບ ຂອງລັດ ແລະ ຈາກຜູ້ສະໜອງ ການຝຶກອົບຮົມແຫ່ງອື່ນໆ - ເຊິ່ງສາມາດຊ່ວຍໃຫ້ທ່ານ ກ້າວໄປສູ່ອາຊີບທຳອິດຂອງທ່ານ ໃນການທ່ອງທ່ຽວ.

ເຕັກໂນໂລຊີ ການຮຽນທາງໄກ ແລະ ອອນລາຍ ໄດ້ສະໜອງ ແຫຼ່ງຂໍ້ມູນທີ່ມີປະໂຫຍດ ສຳລັບການພັດທະນາທາງດ້ານ ວິຊາຊີບ. ເຊີນເຂົ້າເບິ່ງ www.typsy.com ທີ່ເປັນຕົວຢ່າງຂອງເອກະສານ ຝຶກອົບຮົມອອນລາຍສຳລັບຂະແໜງການໂຮງແຮມ.

ພາຍໃນເດືອນມິຖຸນາປີ 2020, ໂຄງການທັກສະ ສຳລັບ ວຽກງານການທ່ອງທ່ຽວ (LAO / 029) ໄດ້ສະໜັບສະໜູນ ຊາວໜຸ່ມ 1,195 ຄົນ ເຂົ້າຮ່ວມຝຶກອົບຮົມ ໃນຫຼັກສູດວິຊາຊີບຂັ້ນຕົ້ນ. ພາຍຫຼັງທີ່ຜູ້ເຂົ້າຮ່ວມຝຶກອົບຮົມ ຮຽນຈົບໄດ້ 3 ເດືອນ ກໍ່ໄດ້ມີການຕິດຕາມ ແລະ ພົບວ່າມີ 88% ໄດ້ເຮັດວຽກ ຫຼື ໄປຮຽນຕໍ່.

ເຄັດລັບ

- ຕິດຕາມເງື່ອນໄຂໃນການຮັບສະໝັກງານ ແລະ ວຸດທິການສຶກສາ ທີ່ຕ້ອງການ ສຳລັບອາຊີບຕ່າງໆ
- ຫາປະສົບການໃນການເຮັດວຽກນຳຜູ້ຄົນ ໂດຍການເປັນອາສາສະໝັກ, ຊອກຫາປະສົບການ ໃນການເຮັດວຽກ ໃນຊ່ວງທ້າຍສັບປະດາ ຫຼື ມື້ພັກ
- ເຄືອຂ່າຍໃນການທ່ອງທ່ຽວ ແລະ ການໂຮງແຮມ ທີ່ພົວພັນຕິດຕໍ່ກັບສາທາລະນະຊົນທຸກມື້, ດັ່ງນັ້ນ, ຜູ້ຈ້າງງານ ຈຶ່ງມອງຫາຄົນທີ່ສາມາດເຂົ້າຫາໄດ້ ແລະ ເປັນນັກສື່ສານທີ່ດີ.
- ໂທລະສັບໄປຫາໂຮງແຮມ ຫຼື ຮ້ານອາຫານ ໃນທ້ອງຖິ່ນ ເພື່ອແນະນຳຕົນເອງ ແລະ ຝາກໃບຊີວະປະຫວັດໄວ້ນຳເຂົາເຈົ້າ

ຮຽນຮູ້ພາສາຕື່ມ

ທ່ານສາມາດຍົກລະດັບທັກສະພາສາອັງກິດ ຂອງທ່ານເອງ ກັບ "Sabaidee English" ແອັບພາສາອັງກິດ ສຳລັບການ ທ່ອງທ່ຽວ ແລະ ການໂຮງແຮມ. ເຂົ້າໄປທີ່ App ຫຼື Play Store ແລ້ວພິມ: Sabaidee English.

ສ້າງຊີວິດໃນຂະແໜງການທ່ອງທ່ຽວ

ການທ່ອງທ່ຽວເປັນອຸດສະຫະກຳໜຶ່ງ ທີ່ເປັນບ່ອນສ້າງໃຫ້ມີທັດສະນະ ສາມາດເຮັດໄດ້ ແລະ ມີຄວາມສຳຄັນເທົ່າໆ ທັກສະ. ໂດຍການປະສົມປະສານທີ່ຖືກຕ້ອງທັງສອງຢ່າງນັ້ນ, ທ່ານສາມາດກ້າວຂຶ້ນຢ່າງວ່ອງໄວ ໂດຍຜ່ານຂັ້ນຕ່າງໆ

ອຸດສະຫະກຳການທ່ອງທ່ຽວ ເປັນເອກະລັກສະເພາະ ໃນກຸ່ມອຸດສະຫະກຳ - ເຊິ່ງຂ່ອນຂ້າງງ່າຍ ທີ່ຈະເຈາະເຂົ້າໄປ ແລະ ໃຫ້ຜົນປະໂຫຍດໃນໄລຍະຍາວ ຢ່າງຫຼວງຫຼາຍ

ການຈ້າງພະນັກງານ:

ຂະແໜງການທ່ອງທ່ຽວ ຈະຕ້ອງພະຍາຍາມໄປເລື້ອຍໆ ເພື່ອບັນຈຸຕຳແໜ່ງງານ, ເມື່ອເກີດຟື້ນຕົວ ຫຼັງຈາກການລະບາດຂອງເຊື້ອພະຍາດໄວຣັດສາຍພັນໃໝ່, ການທ່ອງທ່ຽວຈະເພີ່ມຂຶ້ນເລື້ອຍໆ, ຕຳແໜ່ງງານວ່າງກໍ່ຈະເພີ່ມຂຶ້ນນຳ, ຜູ້ທຳຄວາມສະອາດ, ພະນັກງານເສີບ ແລະ ພະນັກງານຮັບຕ້ອນ ເປັນຕຳແໜ່ງທີ່ຕ້ອງການຫຼາຍທີ່ສຸດ.

ມີວຽກລະດັບເລີ່ມຕົ້ນຫຼວງຫຼາຍ

ວຽກລະດັບເລີ່ມຕົ້ນທີ່ຫຼາກຫຼາຍ ເປັນໂອກາດທາງອາຊີບທີ່ດີ ສຳລັບທຸກຄົນທີ່ກຳລັງກ້າວເຂົ້າສູ່ປະຕູ. ບໍ່ວ່າທ່ານຈະກຳລັງຊອກຫາວຽກເຮັດງານທຳ ຫຼື ເຮັດວຽກເພື່ອກ້າວໄປສູ່ຕຳແໜ່ງລະດັບຜູ້ຈັດການ ໃນທີ່ສຸດ, ອາຊີບດ້ານການທ່ອງທ່ຽວ ເປັນຈຸດເລີ່ມຕົ້ນທີ່ດີ. ຫາກທ່ານລົງທະບຽນການຮຽນ ໃນຫຼັກສູດຝຶກອົບຮົມທີ່ກ່ຽວຂ້ອງ, ທ່ານຈະມີຄວາມຮູ້ທີ່ຈະກ້າວໄປທາງໜ້າ

ວຽກທີ່ມີຜົນຕອບແທນເພີ່ມ

ວຽກລະດັບເລີ່ມຕົ້ນ ສ່ວນຫຼາຍມີເງິນເດືອນເລີ່ມຕົ້ນ 1,100,000 ກີບ/ເດືອນ. ເງິນເດືອນຈະເພີ່ມຂຶ້ນ ເມື່ອທັກສະ ແລະ ປະສົບການຂອງທ່ານເພີ່ມຂຶ້ນ. ທ່ານອາດຈະໄດ້ຮັບຜົນປະໂຫຍດເພີ່ມເຕີມຈາກການເຮັດວຽກ, ເຊິ່ງອາດຈະລວມເຖິງຄ່າບໍລິການ, ອາຫານ ແລະ ເຄື່ອງແບບ, ທີ່ພັກຂອງພະນັກງານ ແລະ ການປະກັນໄພສຸຂະພາບ.

ກ້າວໄປຂ້າງໜ້າ

ມີຫລາຍທຸລະກິດທີ່ສົ່ງເສີມຈາກພາຍໃນ. ປະສົບການ ແລະ ຄວາມເປັນມິດ, ມີບุກຄະລິກທີ່ດີ ແມ່ນຄຸນຄ່າທີ່ດີທີ່ສຸດ ແລະ ຈະບໍ່ມີໃຜສັງເກດບໍ່ເຫັນ. ມັນບໍ່ແມ່ນເລື່ອງແປກ ທີ່ຈະພົບວ່າ ຜູ້ຈັດການສ່ວນໃຫຍ່ ເລີ່ມຕົ້ນອາຊີບຂອງພວກເຂົາໃນວຽກລະດັບເລີ່ມຕົ້ນ.

ສືບຕໍ່ເຮັດວຽກໃນເມື່ອທ່ານຍ້າຍບ່ອນເຮັດວຽກ

ວຽກການທ່ອງທ່ຽວ ມີຢູ່ທົ່ວທຸກພາກຂອງປະເທດ. ການໄດ້ວຽກທີ່ທ່ານຕ້ອງການ ໃນສະຖານທີ່ໃໝ່ ຈະບໍ່ພຽງແຕ່ເຮັດໃຫ້ທ່ານເຕີບໂຕໃນອາຊີບ, ແຕ່ຍັງມີໂອກາດທີ່ເປັນໜ້າຕື່ນເຕັ້ນຫຼາຍ ທີ່ຈະພັດທະນາທັກສະໃໝ່ ແລະ ສະແດງເຖິງການປັບຕົວຂອງທ່ານ.

ໂອກາດມີຢ່າງຫຼວງຫຼາຍ

ການເຮັດວຽກໃນຂະແໜງການທ່ອງທ່ຽວ ບໍ່ເຄີຍເປັນທີ່ໜ້າເບື່ອໜ່າຍ ເພາະວ່າ ມີຫຼາຍບົດບາດ ທີ່ຕ່າງກັນ, ໂອກາດທີ່ຫຼາກຫຼາຍ ແລະ ມີຊ່ວງເວລາທີ່ ໜ້າຕື່ນເຕັ້ນຫຼາຍ ທີ່ໄດ້ຮັບ. ບໍ່ວ່າຈຸດແຂງຂອງທ່ານ ຈະຢູ່ບ່ອນໃດ ຫຼືຄວາມສົນໃຈຂອງທ່ານແມ່ນຫຍັງກໍ່ຕາມ, ທ່ານຄວນຈະສາມາດຊອກຫາຕຳແໜ່ງທີ່ເໝາະສົມກັບຄວາມສາມາດ ສະເພາະຂອງທ່ານເອງ.

ຖ້າຢາກເຫັນຄຳຖາມທີ່ມີຂຶ້ນເລື້ອຍໆ ໃຫ້ເບິ່ງໄປທີ່ຂໍ້ມູນລະອຽດ ການທ່ອງທ່ຽວ 2018/2019 ເຂົ້າໄປທີ່ເວັບໄຊທ໌ **https://vientiane.luxdev.lu/en/activities/project/LAO/029**

ສະພາບຕະຫຼາດແຮງງານທີ່ມີການປ່ຽນແປງຕະຫຼອດເວລາ ແລະ ການຂາດຂໍ້ມູນ ທີ່ມີສາຍເຫດມາຈາກການແຜ່ລະບາດຂອງເຊື້ອພະຍາດໄວຣັດສາຍພັນໃໝ່ (COVID-19) ໝາຍຄວາມວ່າ ຂໍ້ມູນບາງອັນທີ່ນຳສະເໜີຢູ່ໃນນີ້ ອາດຈະມີການປ່ຽນແປງ ນັບຕັ້ງແຕ່ມີການເຜີຍແຜ່. ຂໍແນະນຳໃຫ້ຜູ້ໃຊ້ຂໍ້ມູນ ໃຫ້ອ້າງອີງໃສ່ແຫຼ່ງອື່ນຕື່ມອີກ ສຳລັບ ການຊອກຂໍ້ມູນເພີ່ມເຕີມ ກ່ຽວກັບ ເສດຖະກິດທ້ອງຖິ່ນ ແລະ ຕະຫລາດແຮງງານ.

ວາລະສານຂ່າວຂໍ້ມູນຂ່າວສານຕະຫລາດແຮງງານນີ້ ແມ່ນໄດ້ຮັບແຫຼ່ງຂໍ້ມູນມາຈາກຫຼາຍບ່ອນ ເຊັ່ນ: *ການສຳຫຼວດວິສາຫະກິດທ່ອງທ່ຽວ ແລະ ການໂຮງແຮມ ປີ 2018 ກ່ຽວກັບ ການມີວຽກເຮັດງານທຳ ແລະ ສີມືແຮງງານໃນ ສປປ ລາວ ເຊິ່ງໄດ້ຮັບການສະໜັບສະໜຸນ ຈາກໂຄງການທັກສະ* ສຳລັບວຽກງານທ່ອງທ່ຽວ (LAO/029); *ບົດລາຍງານສະຖິຕິກ່ຽວກັບການທ່ອງທ່ຽວໃນລາວ 2019*, ທີ່ຈັດພິມໂດຍ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຫ່ງ ສປປ ລາວ; *ບົດສັງເຂບ ຂອງທະນາຄານພັດທະນາອາຊີ (ADB) ເລກທີ 141 - ຜົນກະທົບຂອງການແຜ່ລະບາດຂອງເຊື້ອພະຍາດໄວຣັດສາຍພັນໃໝ່ (COVID-19) ຕໍ່ວິສາຫະກິດການທ່ອງທ່ຽວໃນ ສປປ ລາວ: ການປະເມີນຜົນເບື້ອງຕົ້ນ, ເດືອນມີຖຸນາ ປີ2020. ການສຳຫຼວດຂອງທະນາຄານພັດທະນາອາຊີ (ADB) ໄດ້ສ້າງແບບແຜນວິທີການສຳຫຼວດວິສາຫະກິດທ່ອງທ່ຽວ ແລະ ໂຮງແຮມ ປີ 2018 ຂອງການມີວຽກເຮັດງານທຳ ແລະ ສີມືແຮງງານໃນ ສປປ ລາວ.*

* ໂຄງການທັກສະສຳລັບ ວຽກງານທ່ອງທ່ຽວ ໄດ້ສະໜັບສະໜຸນ ການປັບປຸງວຽກງານອາຊີວະສຶກສາ ແລະ ພັດທະນາສີມືແຮງງານ ໃນຂະແໜງການທ່ອງທ່ຽວ ແລະ ໂຮງແຮມ ໃນ ສປປ ລາວ.

ຈຸດເນັ້ນໜັກອັນສະເພາະຂອງໂຄງການ ແມ່ນໃຫ້ການສະໜັບສະໜຸນ ຜູ້ທີ່ມີພື້ນຖານທີ່ດ້ອຍໂອກາດເພື່ອໃຫ້ມີທັກສະທີ່ຈຳເປັນ ໃນການເຮັດວຽກຢູ່ໃນໂຮງແຮມ, ຮ້ານອາຫານ ແລະ ຂະແໜງເສດຖະກິດການທ່ອງທ່ຽວ ທີ່ເຕີບໃຫຍ່ຂຶ້ນ. ແນວຄິດລິເລີ່ມຈຳນວນໜຶ່ງ ທີ່ກ່າວເຖິງໃນວາລະສານຂ່າວນີ້ ແມ່ນໄດ້ຮັບການສະໜັບສະໜຸນຈາກໂຄງການນີ້.

ໂຄງການທັກສະສຳລັບ ວຽກງານທ່ອງທ່ຽວ ແມ່ນໄດ້ຮັບການສະໜັບສະໜຸນທຶນ ໂດຍລັດຖະບານ ແຫ່ງ ສປປ ລາວ, ລັດຖະບານລຸກຊຳບວກ ແລະ ລັດຖະບານສະວິດເຊີແລນ, ແລະ ຈັດຕັ້ງປະຕິບັດໂດຍ ກະຊວງ ສຶກສາທິການ ແລະ ກີລາ ແຫ່ງ ສປປ ລາວ ແລະ ອົງການລຸກຊຳບວກເພື່ອການພັດທະນາ (LuxDev).

ເດືອນພະຈິກ 2020

ໂຄງການທັກສະສຳລັບ ວຽກງານທ່ອງທ່ຽວ (LAO/029)
ຖະໜົນ ຊຸນບຸລິມ, ບ້ານວັດຈັນ, ເມືອງຈັນທະບຸລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 253 156 ແຟັກ: +856 21 253 157
ອີເມວ: lao029@luxdev.lu

ຈັດພິມໂດຍ: ກະຊວງສຶກສາທິການ ແລະ ກີລາ
ຖະໜົນ ລ້ານຊ້າງ, ບ້ານຊຽງຍືນ, ເມືອງຈັນທະບຸລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 216 004